**ບົດຮຽນໂຮງຮຽນວັນອາທິດ**
**ວັນອາທິດທີ 5 ມີນາ 2023 (03-05-2023)**

---

## ພຣະເຢຊູຕອບສນອງຄວາມຕ້ອງການທີ່ຍິ່ງໃຫ່ຍຂອງຂ້າພະເຈົ້າ

*ແມ່ນຫຍັງທີ່ກະຫາຍທີ່ສຸດທີ່ທ່ານເຄີຍເປັນມາ?*

**ຈຸດສຳຄັນໃນບົດຮຽນ:** ມີແຕ່ພຣະເຢຊູເທົ່ານັ້ນທີ່ສາມາດຕອບສນອງຄວາມກະຫາຍຂອງຂ້າພະເຈົ້າໄດ້ຢ່າງແທ້ຈິງ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ບໍ່ເປັນການດີທີ່ປ່ອຍໃຫ້ກະຫາຍນ້ຳຈົນຮ່າງກາຍເຈັບປວດ.

ເມື່ອຫຼາຍປີກ່ອນ, ຂ້າພະເຈົ້າໄດ້ຝຶກຊ້ອມແລ່ນມາລາທອນ, ບໍ່ມີຜູ້ໃດທີ່ຈະໄດ້ໄຊຊນະໃນການແລ່ນມາລາທອນໂດຍບັງເອີນ, ເພາະວ່າການແລ່ນນັ້ນຕ້ອງມີການຝຶກຝົນແລະມີລະບຽບວິນັຍ. ເຊົ້າວັນນຶ່ງຂ້າພະເຈົ້າຕັ້ງເປົ້າໝາຍແລ່ນໃນລະຍະທາງ16 ໄມຣ໌. ໃນຂນະທີ່ຂ້າພະເຈົ້າເລີ້ມຕົ້ນແລ່ນນັ້ນ, ອຸນຫະພູມຢູ່ປະມານ 50 ອົງສາ, ແຕ່ອຸນຫະພູມໄດ້ເພີ້ມຂຶ້ນເຖິງ 80 ອົງສາຢ່າງໄວວາ. ໃນຕອນນັ້ນຂ້າພະເຈົ້າຮູ້ຕົວວ່າບໍ່ໄດ້ເອົານ້ຳໄປພຽງພໍ. ການເປັນຄົນທີ່ມີຄວາມຕັ້ງໃຈສູງ (ພັນລະຍາຂ້າພະເຈົ້າເອີ້ນວ່າ “ດື້ດຶງ”), ຂ້າພະເຈົ້າໄດ້ບັງຄັບຕົນເອງ, ໃນຄວາມຮ້ອນນັ້ນມັນໃຊ້ເວລາບໍ່ດົນກໍເຮັດໃຫ້ເກີດກະຫາຍນ້ຳ-ຫຼາຍທີ່ສຸດ. ຂ້າພະເຈົ້າກະຫາຍນ້ຳແຮງຫຼາຍຈົນເຮັດໃຫ້ເຈັບໄຂ່ຫູ້ງ. ນີ້ແມ່ນສະຖານະການທີ່ອັນຕະລາຍຫຼາຍ, ແລະຂ້າພະເຈົ້າຮູ້ສຶກດີໃຈຫຼາຍທີ່ໄດ້ແລ່ນກັບຄືນມາເຖິງລົດ, ໄດ້ດື່ມນ້ຳແລະຫາຍເມື່ອຍ.

ຄວາມກະຫາຍຂອງພວກເຮົາບອກພວກເຮົາເມື່ອເຮົາຕ້ອງການນ້ຳ, ແຕ່ວ່າຊີວິດຂອງພວກເຮົາກໍບອກພວກເຮົາວ່າເຮົາຕ້ອງການນ້ຳແຫ່ງຊີວິດນິຣັນດອນຫຼາຍຊ່ຳໃດ. ນ້ຳອັນນີ້ຈະບໍ່ພົບຢູ່ໃນຂວດແກ້ວຫຼືບໍ່ນ້ຳພຸ. ພຣະເຢຊູໄດ້ພົບກັບຍິງສາວຊາວຊາມາເຣັຽຄົນນຶ່ງຜູ້ທີ່ໄດ້ຄົ້ນພົບວ່າເຮົາຈະຮູ້ໄດ້ທຸກສິ່ງເມື່ອເຮົາພົບກັບບຸກຄົນທີ່ຮູ້ຈັກເຮົາດີກ່ວາຕົວເຮົາເອງ.

**ພຣະຄັມພີກ່າວວ່າຢ່າງໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

### ສຶກສາພຣະຄັມພີ

### 1. ໂຢຮັນ 4:7-14

*7. ມີຍິງຊາວຊາມາເຣັຽຄົນນຶ່ງມາຕັກນ້ຳພຣະເຢຊູຊົງກ່າວກັບນາງວ່າ, “ຂໍໃຫ້ເຮົາກິນນ້ຳແດ່.” 8. (ຂນະນັ້ນພວກສາວົກຂອງພຣະອົງ*
*ເຂົ້າໄປຊື້ອາຫານໃນເມືອງ). 9. ຍິງຊາວຊາມາເຣັຽທູນພຣະອົງວ່າ, “ດ້ວຍເຫດໃດທ່ານຜູ້ເປັນຊາດຍິວຈຶ່ງ ຂໍດື່ມນ້ຳນຳຂ້ານ້ອຍຜູ້ເປັນ*
*ຊາດຊາມາເຣັຽ” (ເພາະພວກຍິວກັບພວກຊາມາເຣັຽບໍ່ເຄີຍມີການກ່ຽວຂ້ອງກັນ). 10. ພຣະເຢຊູຊົງຕອບນາງວ່າ, “ຖ້າເຈົ້າໄດ້ຮູ້ຈັກ*
*ຂອງທີ່ພຣະເຈົ້າຊົງປະທານແລະຮູ້ຈັກຜູ້ທີ່ກຳລັງເວົ້າກັບເຈົ້າວ່າ ‘ຂໍໃຫ້ເຮົາກິນນ້ຳແດ່’ ເຈົ້າກໍຄົງຈະຂໍຈາກເພິ່ນແລະຜູ້ນັ້ນກໍຄົງຈະໃຫ້ນ້ຳ*
*ອັນປະກອບດ້ວຍຊີວິດໃຫ້ແກ່ເຈົ້າ.” 11. ນາງທູນຕອບພຣະອົງ ວ່າ, “ນາຍເອີຍ, ນາຍບໍ່ມີຫຍັງຕັກແລະນ້ຳສ້າງນີ້ກໍເລິກນາຍຈະໄດ້*
*ນ້ຳປະກອບດ້ວຍຊີວິດນັ້ນມາແຕ່ໃສ. 12. ນາຍໃຫຍ່ກວ່າຢາໂຄບບັນພະບຸລຸດຂອງເຮົາຜູ້ໄດ້ໃຫ້ນ້ຳສ້າງນີ້ແກ່ເຮົາຫລືແລະຢາໂຄບເອງ*
*ກໍໄດ້ດື່ມແຕ່ນ້ຳສ້າງນີ້ຮ່ວມທັງລູກຊາຍແລະຝູງສັດຂອງເພິ່ນ.” 13. ພຣະເຢຊູຊົງຕອບນາງວ່າ, “ທຸກຄົນທີ່ກິນນ້ຳນີ້ກໍຍັງຈະຢາກອີກ.*
*14. ແຕ່ຜູ້ທີ່ກິນນ້ຳຊຶ່ງເຮົາຈະປະທານໃຫ້ນັ້ນຈະບໍ່ຢາກອີກຕໍ່ໄປຈັກເທື່ອ ນ້ຳຊຶ່ງເຮົາຈະປະທານໃຫ້ນັ້ນຈະກາຍເປັນນ້ຳພຸໃນຕົວຜູ້ນັ້ນ*
*ແລະຈະພຸ່ງຂຶ້ນເຖິງຊີວິດອັນຕລອດໄປເປັນນິດ.”*

ແມ່ຍິງຊາວຊາມາເຣັຽ. “ເປັນຫົວຂໍ້ຂຶ້ນຕົ້ນທີ່ນຳພວກເຮົາເຂົ້າມາໃນບົດຮຽນນີ້. ພວກເຮົາບໍ່ຮູ້ຊື່ຂອງນາງ, ແຕ່ພວກເຮົາຮູ້ວ່ານາງມາຈາກ

ໃສ-ຈາກສະຖານທີ່ບ່ອນນາງມາກໍໄດ້ບອກເຣື່ອງລາວຫຼາຍຢ່າງກ່ຽວກັບນາງ, ການທີ່ພວກເຮົາຮູ້ວ່ານາງເປັນຍິງຊາວຊາມາເຣັຽນັ້ນມັນໃຫ້ຫົວຂໍ້ສຳລັບການສົນທະນາກ່ຽວກັບເຣື່ອງທີ່ພວກເຮົາກຳລັງຈະເປັນພະຍານ. ພຣະເຢຊູຢາກຈະເຂົ້າມີສ່ວນຮ່ວມກັບທຸກໆຄົນບໍ່ວ່າບັນຫາເຣື່ອງລາວຊີວິດຫຼືສະພາບການຂອງເຂົາຈະເປັນຢ່າງໃດ, ສ່ວນຍິງຊາມາເຣັຽຜູ້ນີ້ບໍ່ຮູ້ຫັຍງໃນເມື່ອນາງໄປເຖິງນໍ້າສ້າງໃນເວລານັ້ນ; ນາງອາດຈະຕົກຕະລຶງເລັກນ້ອຍເມື່ອພົບກັບພຣະເຢຊູ. ພວກເຮົາກໍບໍ່ຮູ້ເຫດຜົນທີ່ແທ້ຈິງວ່າເປັນຫັຽງນາງຈຶ່ງມາຕັກນໍ້າສ້າງໃນຕອນທ່ຽງ (ຂໍ້6), ແຕ່ມັນມີສິ່ງນຶ່ງທີ່ຍິ່ງໃຫ່ຽທີ່ສຸດຄືນາງບໍ່ເປັນທີ່ຍອມຮັບຂອງສັງຄົມ, ເຖິງແມ່ນໃນບັນດາເຊື້ອຊາດຂອງຕົນ. ຖ້າເປັນແນວນັ້ນ, ນາງຈຶ່ງມາໃນຕອນທ່ຽງວັນເພື່ອຈະຢູ່ກັບຕົວເອງແລະເພື່ອຫຼີກລ້ຽງຈາກສາຍຕາດູຖູກດູໝິ່ນຫຼືເວັ້ນຈາກຄຳເວົ້າດູໝິ່ນສຽດສີຈາກພວກຜູ້ຍິງທີ່ມາຕັກນໍ້າສ້າງໃນຕອນເຊົ້າ, ພວກເຮົາຈະເຫັນໃນປໂຍກຕໍ່ມາວ່ານາງເອງມີບັນຫາບາງຢ່າງໃນຊີວິດສ່ວນຕົວທີ່ອາດເປັນສາເຫດຂອງການກຽດຊັງນີ້.

*ແມ່ນຫຍັງຈັບຈຸດສົນໃຈຂອງທ່ານຈາກຕອນເລີ້ມຕົ້ນການສົນທະນາລະຫວ່າງພຣະເຢຊູແລະຜູ້ຍິງທີ່ນໍ້າສ້າງ?*

ແທນທີ່ຈະຕັກນໍ້າຂຶ້ນຈາກສ້າງໃຫ້ກັບຕົວເອງ, ນາງກັບໄດ້ຍິນສຽງຄຳຂໍດື່ມນໍ້າຈາກຜູ້ຊາຍຊາວຢິວຜູ້ນຶ່ງ. ກ່ຽວກັບປະສົບການທີ່ເກີດຂຶ້ນນີ້ບໍ່ມີຫຍັງເຂົ້າເຣື່ອງແກ່ນາງເລີຍ, ນາງໄດ້ຖາມພຣະອົງ, "ດ້ວຍເຫດໃດທ່ານຜູ້ເປັນຊາດຢິວຈຶ່ງຂໍດື່ມນໍ້ານຳຂ້ານ້ອຍຜູ້ເປັນຊາດຊາມາເຣັຽ?" ເພາະວ່າຊາວຢິວບໍ່ໄດ້ພົວພັນກັບຊາວຊາມາເຣັຽ" (ຂໍ້ 9).

ສິ່ງນຶ່ງທີ່ພຣະເຢຊູເຮັດໄດ້ດີຫຼາຍແມ່ນການສົນໃຈໃນການສົນທະນາເຣື່ອງປະຈຳວັນເຊິ່ງຕໍ່ເນື່ອງໃສ່ການສົນທະນາເຣື່ອງນິຣັນດອນ. ການສົນທະນານີ້ກໍບໍ່ໄດ້ແຕກຕ່າງ. ໃນຂນະທີ່ພວກເພິ່ນເລີ້ມການສົນທະນາແບບງ່າຍໆຄືເວົ້າເຣື່ອງຄວາມຕ້ອງການນໍ້າຝ່າຍມະນຸດຂອງພຣະອົງ, ພຣະເຢຊູໄດ້ປ່ຽນການສົນທະນາໄປສູ່ຄວາມຕ້ອງການຝ່າຍຊີວິດນິຣັນດອນຂອງນາງສຳລັບການໄຖ່ໃຫ້ພົ້ນ. ນາງຄິດວ່າພຣະອົງກຳລັງເວົ້າເຖິງຄວາມຕ້ອງການຂອງພຣະອົງ, ແຕ່ພຣະອົງໄດ້ເວົ້າເຖິງຄວາມຕ້ອງການຂອງນາງ.

ຍິງຊາວຊາມາເຣັຽຮູ້ສຶກສັບສົນໃນຕອນທຳອິດ, ນາງບໍ່ເຂົ້າໃຈວ່າຜູ້ຊາຍຄົນນີ້ຈະໃຫ້ນໍ້າແກ່ນາງໄດ້ແນວໃດທີ່ຈະເຮັດໃຫ້ນາງບໍ່ກະຫາຍນໍ້າອີກຈັກເທື່ອ. ຖ້າພຣະເຢຊູສາມາດຕອບສນອງນໍ້ານີ້ໃຫ້ນາງໄດ້ໂດຍທີ່ບໍ່ມີສິ່ງໃດຈະຕັກນໍ້າຂຶ້ນຈາກສ້າງໄດ້ແລ້ວ ພຣະອົງກໍຕ້ອງຮູ້ກ່ຽວກັບແຫຼ່ງນໍ້າອີກແຫ່ງນຶ່ງເຊິ່ງເປັນແຫຼ່ງທີ່ຈະຕັກເອົາໄດ້ງ່າຍກ່ວານີ້. ຄຳຖາມຕໍ່ໄປຂອງນາງໄດ້ສະແດງໃຫ້ເຫັນຄວາມຄິດຂອງນາງກ່ຽວກັບເຣື່ອງນີ້: "ນາຍໃຫຍ່ກວ່າຢາໂຄບບັນພະບຸລຸດຂອງເຮົາຜູ້ໄດ້ໃຫ້ນໍ້າສ້າງນີ້ແກ່ເຮົາຫຼືແລະຢາໂຄບເອງກໍໄດ້ດື່ມແຕ່ນໍ້າສ້າງນີ້ຮວມທັງລູກຊາຍແລະຝູງສັດຂອງເພິ່ນ." (ຂໍ້ 12). ສຳລັບນາງ, ຖ້ອຍຄຳຂອງພຣະເຢຊູໄດ້ບົ່ງບອກເຖິງວ່າພຣະອົງນັ້ນຊົງເປັນໃຫ່ຽກ່ວາຢາໂຄບ.

ນີ້ມັນແມ່ນຈຸດປ່ຽນຂອງການສົນທະນາ. ພຽງແຕ່ຄຳເວົ້າປໂຍກດຽວ ພຣະເຢຊູໄດ້ປ່ຽນຈາກການສົນທະນາກ່ຽວກັບຊີວິດຝ່າຍເນື້ອກາຍມາເປັນການສົນທະນາກ່ຽວກັບຊີວິດນິຣັນດອນ. ພຣະອົງຮູ້ຈັກແຫຼ່ງນໍ້າອີກແຫຼ່ງນຶ່ງ, ແຕ່ເພາະພຣະອົງເອງເປັນແຫຼ່ງນໍ້ານັ້ນ. ພຣະອົງໄດ້ເປີດເຜີຍໃຫ້ນາງໄດ້ແກ້ໄຂບັນຫາທີ່ນາງເອງບໍ່ໄດ້ຮູ້ວ່ານາງມີ.

*ມີຫຍັງແດ່ໃນວັດທະນະທັມທີ່ເປັນຂົວຕໍ່ທີ່ທ່ານເຄີຍໄດ້ເຫັນບາງຄົນໃຊ້ຢ່າງມີປະສິດຕິພາບເພື່ອເລີ້ມຕົ້ນການສົນທະນາຝ່າຍວິນຍານ?*

## 2. ໂຢຮັນ 4:15-18

*15. ນາງທູນພຣະອົງວ່າ, "ນາຍເອີຍ, ຂໍປະທານນໍ້ານັ້ນໃຫ້ຂ້ານ້ອຍເພື່ອຂ້ານ້ອຍຈະບໍ່ຢາກແລະຈະບໍ່ໄດ້ມາຕັກທີ່ນີ້ອີກ." 16. ພຣະເຢຊູຊົງບອກນາງວ່າ, "ຈົ່ງໄປເອີ້ນເອົາຜົວຂອງເຈົ້າມາທີ່ນີ້." 17. ນາງທູນວ່າ, "ຂ້ານ້ອຍບໍ່ມີຜົວ" ພຣະເຢຊູຊົງກ່າວວ່າ, "ເຈົ້າເວົ້າຖືກແລ້ວວ່າເຈົ້າບໍ່ມີຜົວ. 18. ເພາະເຈົ້າມີຜົວຫ້າຄົນແລ້ວແລະຜູ້ທີ່ເຈົ້າມີຢູ່ດຽວນີ້ກໍບໍ່ແມ່ນຜົວຂອງເຈົ້າທີ່ເຈົ້າເວົ້ານັ້ນເປັນຄວາມຈິງ."*

ນາງອາດຄິດວ່ານາງໄດ້ມານໍ້າສ້າງພຽງລຳພັງຄົນດຽວເພື່ອຫຼີກລ້ຽງຈາກຄວາມອັບອາຍຕໍ່ຜູ້ຄົນທີ່ມາຕັກນໍ້າສ້າງຮ່ວມກັນ. ນາງຮູ້ສຶກວ່ານາງຫຼີກລ້ຽງຈາກຄວາມອັບອາຍແລະຄວາມບາບຂອງນາງຕໍ່ຝູງຊົນ. ມາເຖິງນີ້, ພຣະເຢຊູບໍ່ໄດ້ຊີ້ບອກແຫຼ່ງທີ່ມາຂອງສາຍນໍ້າ. ພຣະອົງບໍ່ໄດ້ສະແດງໃຫ້ນາງເຫັນວິທີທີ່ຈະຕັກນໍ້າຂຶ້ນຈາກສ້າງ. ແທນທີ່ຈະເປັນຢ່າງນັ້ນ, ພຣະເຢຊູ-ທີ່ເປັນຄົນແປກໜ້າ-ໄດ້ບົ່ງບອກເຖິງ

ຄວາມບາບຂອງນາງ. ເປັນບາບທີ່ນາງບໍ່ຢາກເວົ້າເຖິງ. ພຣະເຢຊູບອກນາງໃຫ້ໄປເອີ້ນເອົາຜົວຂອງນາງແລະພາລາວມາທີ່ນ້ຳສ້າງນີ້.

ພວກເຮົາສ່ວນຫຼາຍ, ເມື່ອປະເຊີນໜ້າກັບບາງສິ່ງທີ່ໜ້າອາຍ, ປິດບັງ, ລົບຫຼີກຫຼືປົບໜີຈາກຄວາມຈິງ. ພວກເຮົາຈະປະພຶດຢ່າງນີ້ໂດຍກົງເພາະວ່ານີ້ແມ່ນວິທີການທີ່ອາດາມແລະເອວາເຮັດໃນການປະເຊີນໜ້າກັບພຣະເຈົ້າໃນສວນເອເດນຫຼັງຈາກທີ່ພວກເຂົາໄດ້ກິນໝາກໄມ້ແຫ່ງການຮູ້ດີຮູ້ຊົ່ວ (ປະຖົມມະການ 3:8). ຜູ້ຍິງຊາວຊາມາເຣັຽໄດ້ຕອບໃນຄຳໆດຽວກັນ. ນາງຄິດວ່ານາງຈະສາມາດຫຼີກລ້ຽງໄດ້ດ້ວຍຄຳຕອບວ່ານາງບໍ່ມີຜົວ, ແຕ່ນາງບໍ່ຮູ້ວ່ານາງກຳລັງສົນທະນາຢູ່ກັບໃຜ. ຜູ້ຊາຍຄົນນີ້ບໍ່ພຽງແຕ່ເບິ່ງເຂົ້າໄປໃນຊີວິດຂອງນາງແລະເວົ້າຄວາມຈິງກ່ຽວກັບນາງ. ໃນຖານະເປັນຄົນແປກໜ້າ, ພຣະອົງຄົງຈະບໍ່ຮູ້ຈັກດອກ.

ບໍ່ມີຫັຽງກ່ຽວກັບພວກເຮົາທີ່ພຣະເຢຊູບໍ່ຮູ້ພຣະອົງໄດ້ສ້າງພວກເຮົາ, ແລະດັ່ງນັ້ນ, ພຣະອົງຮູ້ຈັກພວກເຮົາ. ພວກເຮົາມັກຈະຫຼອກຕົນເອງຄິດວ່າພວກເຮົາສາມາດປິດບັງຄວາມບາບຂອງພວກເຮົາໄດ້. ພວກເຮົາເຊື່ອວ່າ ມັນຈະບໍ່ຖືກຈັບໄດ້ແລະຖືກເປີດເຜີຍຕໍ່ສາທາລະນະ, ແລະຈະບໍ່ມີໃຜຮູ້ເລີຍ. ຄວາມຈິງແມ່ນພຣະເຈົ້າຮູ້ຢູ່ສເມີ. ບໍ່ມີຫັຽງເປັນເຣື່ອງແປກສຳລັບພຣະອົງ. ເມື່ອພຣະເຢຊູເລີ້ມຕົ້ນສົນທະນາກັບຍິງຄົນນັ້ນ, ພຣະອົງຮູ້ສະພາບການຂອງນາງ, ຖານະການແຕ່ງງານແລະປວັດຂອງນາງ, ການຮູ້ເຣື່ອງທັງໝົດນີ້ບໍ່ໄດ້ກີດກັ້ນພຣະອົງຈາກການພົບປະສົນທະນາກັບນາງທີ່ນ້ຳສ້າງ. ທີ່ຈິງມັນອາດເປັນເຫດຜົນທີ່ພຣະເຢຊູເລືອກເດີນທາງຜ່ານເມືອງຊາມາເຣັຽ. ແນ່ນອນວ່າພຣະເຢຊູໄດ້ພົບຍິງຄົນນີ້ບໍ່ແມ່ນເປັນເຣື່ອງບັງເອີນໃນວັນນີ້ໃນເວລານີ້ແລະພາຍໃຕ້ສະພາບການເຫຼົ່ານີ້. ພຣະເຢຊູເຮັດສິ່ງນີ້ກັບແຕ່ລະຄົນທີ່ພຣະອົງພົບ; ພຣະອົງພົບເຂົາໃນສະຖານທີ່ທີ່ເຂົາເປັນຢູ່.

*ແມ່ນຫຍັງຄືອຸປສັກບາງຢ່າງໃນການຮັບຮູ້ບາບຂອງພວກເຮົາ?*

## 3. ໂຢຮັນ 4:25-26

*25. ນາງທູນພຣະອົງວ່າ, “ຂ້ານ້ອຍຊາບວ່າພຣະເມຊີອາ (ທີ່ເອີ້ນວ່າພຣະຄຣິດ) ຈະສະເດັດມາເມື່ອພຣະອົງສະເດັດມາ ແລ້ວພຣະອົງຈະຊົງຊີ້ແຈງທຸກສິ່ງແກ່ພວກຂ້ານ້ອຍ.” 26. ພຣະເຢຊູຊົງກ່າວກັບນາງວ່າ, “ເຮົາຜູ້ທີ່ເວົ້າກັບເຈົ້າຢູ່ນີ້ແຫລະ, ຄືທ່ານຜູ້ນັ້ນ.”*

ຍິງຊາວຊາມາເຣັຽອາດຈະບໍ່ຮູ້ຈັກຫຼາຍວ່າມັນມີສິ່ງໃດເກີດຂຶ້ນໃນຊີວິດແຕ່ງງານແລະນາງກໍບໍ່ອາດຮູ້ຈັກດີປານໃດກ່ຽວກັບການນະມັສການ (ໂຢຮັນ 4:9-24) ແຕ່ນາງຮູ້ວ່າວັນນຶ່ງພຣະເມຊີອາຈະສະເດັດມາ. ນາງບໍ່ຮູ້ທຸກຢ່າງ, ແຕ່ນາງຮູ້ວ່າພຣະເມຊີອາຈະສະເດັດມາ. ອັນໃດກໍຕາມທີ່ນາງໄດ້ຍິນຕໍ່ໄປນີ້ຈະປ່ຽນແປງຊີວິດຂອງນາງ, ແລະມີຢູ່ຊົ່ວນິລັນດອນ, ຕລອດໄປ. “ພຣະເຢຊູບອກນາງວ່າ, “ເຮົາຜູ້ທີ່ເວົ້າກັບເຈົ້າຢູ່ນີ້ແຫຼະຄືທ່ານຜູ້ນັ້ນ.” ຜູ້ຊາຍທີ່ຂໍນ້ຳດື່ມຈາກນາງແມ່ນພຣະອົງນັ້ນແຫຼະທີ່ນາງລໍຖ້າຢູ່. ແມ່ນພຣະອົງນັ້ນແຫຼະທີ່ຈະຮັກນາງໂດຍບໍ່ມີເງື່ອນໄຂ. ພຣະອົງນັ້ນແຫຼະທີ່ຈະຊ່ວຍນາງ, ຊຶ່ງສອງສາມປີບໍ່ດົນຕໍ່ມາ, ກໍຈະຖືກໂທດປະຫານຊີວິດເໝືອນດັ່ງນັກໂທດເທິງໄມ້ກາງແຂນແລະຖືກດົນບັນດານໃຫ້ຟື້ນຄືນມາຈາກຕາຍ. ການເດີນໃນເວລາກາງວັນທີ່ໄດ້ນຳພານາງໄປເຖິງນ້ຳສ້າງບໍ່ໄດ້ເປັນໄປຕາມທີ່ນາງໄດ້ຄາດຄິດເອົາໄວ້ເລີຍ. ພຣະເຈົ້າຊົງດີທີ່ພົບພວກເຮົາໃນບ່ອນທີ່ເຮົາຢູ່ແລະເຮັດໃຫ້ພວກເຮົາຕື່ນປລາດໃຈຕໍ່ພຣະຄຸນຂອງພຣະອົງ.

ຫຼັງຈາກການນະມັສການໃນຕອນເຊົ້າ. ພີ່ນ້ອງໃນໂບດອາຍຸແປດສິບປີໄດ້ແນະນຳຂ້າພະເຈົ້າໃຫ້ຮູ້ຈັກກັບຍິງໜຸ່ມຄົນນຶ່ງອາຍຸຊາວປີ. ພວກເຂົາເປັນເພື່ອນບ້ານກັນແລະຜູ້ຍິງອາວຸໂສໄດ້ເຊື້ອເຊີນນາງມາໂບດເປັນແຂກໃນເຊົ້າມື້ນັ້ນ. ຂ້າພະເຈົ້າຕື່ນເຕັ້ນ, ແຕ່ແປກໃຈເລັກນ້ອຍ. ແມ່ຍິງຜູ້ອາຍຸແປດສິບປີຈະມີຫັຽງທີ່ຄ້າຍຄືກັນກັບຜູ້ມີອາຍຸຊາວປີ? ຄວາມຢາກຮູ້ຢາກເຫັນຂອງຂ້າພະເຈົ້າເກີດຂຶ້ນ, ສະນັ້ນຂ້າພະເຈົ້າຈຶ່ງຖາມ. ແມ່ຍິງອາວຸໂສຄົນນັ້ນຖືກໝາຂອງຍິງໜຸ່ມກັດ, ແຕ່ແທນທີ່ຜູ້ຍິງອາວຸໂສຄົນນັ້ນຈະໃຈຮ້າຍຕໍ່ນາງແລະໄປແຈ້ງຄວາມຜູ້ຍິງອາວຸໂສຄົນນັ້ນໄດ້ເຊີນນາງໄປໂບດນຳກັນ.

ບາງສິ່ງບາງຢ່າງທີ່ໜ້າປລາດໃຈໄດ້ເກີດຂຶ້ນ. ຍິງໜຸ່ມໄດ້ຍິນຂ່າວປະເສີດເຣື່ອງພຣະເຢຊູຄຣິດ, ນາງໄດ້ສຳນຶກຜິດຕໍ່ບາບຂອງຕົນ, ແລະໄດ້ຕັດສິນໃຈຖິ້ມໃຈເກົ່າເອົາໃຈໃໝ່, ແລະໄດ້ເຊື່ອວາງໃຈໃນພຣະເຢຊູຄຣິດໃຫ້ເປັນພຣະຜູ້ຊ່ວຍໃຫ້ລອດຂອງນາງ. ການທີ່ນາງເຂົ້າຮ່ວມໂບດແລະການທີ່ນາງມີຊີວິດຖືກປ່ຽນແປງໃໝ່ໂດຍພຣະເຢຊູບໍ່ໄດ້ຢູ່ໃນແຜນການຂອງນາງໃນມື້ທີ່ໝາຂອງນາງຖືກຫຼູດອອກແລະໄດ້ກັດເພື່ອນບ້ານຂອງນາງ, ແຕ່ວ່າມັນຢູ່ໃນແຜນການຂອງພຣະເຈົ້າ.

ຜູ້ຍິງທີ່ນໍ້າສ້າງບໍ່ໄດ້ພົບຄວາມພັກຜ່ອນນໍາຜົວລາວອີກຫຼືໃນສາຍນໍ້າ. ນາງຕ້ອງການບາງຢ່າງທີ່ເໜືອທັມມະຊາດຄືກັບພວກເຮົາທຸກຄົນຕ້ອງການ. ແລະນັ້ນກໍຄືສິ່ງທີ່ນາງໄດ້ພົບເມື່ອນາງໄດ້ພົບກັບພຣະເຢຊູທີ່ນໍ້າສ້າງຕອນກາງວັນ.

*ພວກເຮົາຈະຮູ້ໄດ້ແນວໃດວ່າເຮົາສາມາດວາງໃຈເຊື່ອພຣະເຢຊູ?*

## ນໍາໃຊ້ໃນຊີວິດ

ມີແຕ່ພຣະເຢຊູເທົ່ານັ້ນທີ່ສາມາດຕອບສນອງຄວາມກະຫາຍຂອງຂ້າພະເຈົ້າໄດ້ຢ່າງແທ້ຈິງ. ຈົ່ງເລືອກຂໍ້ນຶ່ງຂອງການນໍາໃຊ້ໃນຊີວິດຕໍ່ລົງໄປນີ້:

- **ຈົ່ງຈົດຈໍາ.** ພຣະຄຣິດເຂົ້າມາໃນຊີວິດຂອງທ່ານເມື່ອໃດ? ລອງຄິດທົບທວນເບິ່ງເວລານັ້ນ. ຂອບຄຸນພຣະເຢຊູສໍາລັບການຊ່ວຍກູ້ເອົາທ່ານ. ຖ້າທ່ານຫາກບໍ່ສາມາດຄຶດໄດ້ໃນເວລານີ້ຫຼືທ່ານຍັງບໍ່ທັນໄດ້ເລີ້ມຕົ້ນເຊື່ອໄວ້ວາງໃຈໃນພຣະຄຣິດໃນເວລານີ້. ບອກສິດຍາພິບານຂອງທ່ານຫຼືຜູ້ເຊື່ອຄົນອື່ນແລະຂໍຮ້ອງໃຫ້ພວກເພິ່ນຊ່ວຍທ່ານ.

- **ເຊື່ອມຕໍ່ພົວພັນ.** ມີໃຜທີ່ຢູ່ອ້ອມຮອບຕົວທ່ານທີ່ອາດມີຄວາມຮູ້ສຶກວ່າຢູ່ໂດດດ່ຽວຄືກັບຍິງຊາວຊາມາເຣັຽທີ່ຢູ່ໃນນໍ້າສ້າງ? ໃຊ້ເວລາຊົ່ວລະຍະນຶ່ງໃນອາທິດນີ້ແລະຂຽນບັດເຊີນ, ໂທລະສັບໄປຫາ, ຫຼືທັກຂໍ້ຄວາມສົ່ງໄປ. ໃຫ້ຄົນນັ້ນຮູ້ວ່າທ່ານຮັກເຂົາແລະເປັນຫ່ວງເປັນໄຍເຂົາ. ພຣະເຢຊູໄດ້ພົບຍິງຊາວຊາມາເຣັຽແລະຮູ້ສິ່ງທີ່ນາງຕ້ອງການ. ເຮັດໃຫ້ບາງຄົນຮູ້ວ່າທ່ານຮັກເຂົາ.

- **ອົດອາຫານ.** ຖ້າທ່ານສາມາດເຂົ້າໃຈທາງການແພດ, ໃຫ້ອົດອາຫານມື້ນຶ່ງຫຼືສອງມື້ໃນອາທິດນີ້. ພຣະເຢຊູໄດ້ກະຕຸ້ນຍິງຊາວຊາມາເຣັຽກ່ຽວກັບຄວາມຄິດຄວາມຕ້ອງການທາງດ້ານຮ່າງກາຍໃຫ້ມາເປັນຄວາມຄິດຄວາມຕ້ອງການທາງດ້ານຝ່າຍຈິດວິນຍານ. ການຖືສິນອົດອາຫານສາມາດຊ່ວຍພວກເຮົາຈັດລໍາດັບຄວາມສໍາຄັນຂອງຄວາມຕ້ອງການອາຫານທາງຝ່າຍຈິດວິນຍານຫຼາຍ ກ່ວາອາຫານທາງຝ່າຍຮ່າງກາຍ.

ພວກເຮົາທຸກຄົນຮູ້ວ່າຄວາມກະຫາຍມັນເປັນແນວໃດ. ບາງຄົນໃນພວກເຮົາຮູ້ວ່າຄວາມກະຫາຍແທ້ໆມັນເປັນແບບໃດ. ນັ້ນເປັນຄວາມຈິງຂອງການກະຫາຍທາງຝ່າຍຈິດວິນຍານຂອງພວກເຮົາ. ຂອບພຣະຄຸນ, ພຣະເຢຊູເປັນນໍ້າແຫ່ງຊີວິດຂອງພວກເຮົາ. ພຣະອົງເປັນຜູ້ທີ່ພວກເຮົາແນ່ໃຈວ່າພຣະອົງຈະບໍ່ເຮັດໃຫ້ພວກເຮົາກະຫາຍອີກຈັກເທື່ອ.

**ອຸປຖັມໂດຍລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ VR**